| Sanford Policy<br>ກິດຈະການ<br>Patient Financial Services: | Financial Assistance - Enterprise<br>ໄດ້ຮັບອະນຸມັດໂດຍ: Enterprise Board of Trustees, EXECUTIVE VICE PRESIDENT, CHIEF FINANCIAL OFFICER & TREASURER, SYSTEM VICE PRESIDENT, FINANCE, HEALTH SERVICES |
|---|---|
| ວັນທີທີ່ກວດຄືນ/ປັບປຸງ:<br>10/13/2021 | ກຳນົດໂດຍ: SENIOR DIRECTOR, PATIENT ACCOUNTS |

**ນະໂຍບາຍອ້າງອີງ** ການຈັດເກັບໜີ້ - ກິດຈະການ

**ຂອບເຂດ:** ຜູ້ໃຫ້ບໍລິການ ແລະ ສະຖານທີ່ບໍລິການຂອງ Sanford ທັງໝົດ

**ຈຸດປະສົງ:**
Sanford ມຸ່ງໝັ້ນທີ່ຈະໃຫ້ການດູແລເບິ່ງແຍງສຸກເສີນ ແລະ ຈຳເປັນທາງການແພດແກ່ຄົນເຈັບທຸກຄົນໂດຍບໍ່ຈຳແນກເຊື້ອຊາດ, ບົດກາຍ, ເພດ, ຊາດກຳເນີດ, ຄວາມພິການ, ອາຍຸ ຫຼື ຄວາມສາມາດໃນການຊຳລະ. ນະໂຍບາຍນີ້ກຳນົດນະໂຍບາຍ ແລະ ລະບຽບການຂອງ Sandford ໃນການສະເໜີ ແລະ ການສະໜອງໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ຄົນເຈັບທີ່ມີຄຸນສົມບັດເໝາະສົມທຸກຄົນທີ່ກຳລັງໄດ້ຮັບການດູແລເບິ່ງແຍງສຸກເສີນ ແລະ ຈຳເປັນທາງການແພດຢູ່ທີ່ໂຮງໝໍ ແລະ ຄລີນິກຂອງ Sanford.

**ນະໂຍບາຍ:**
ຄົນເຈັບທີ່ໄດ້ຮັບການດູແລເບິ່ງແຍງສຸກເສີນ ຫຼື ຈຳເປັນທາງການແພດ ແລະ ການບໍລິການທີ່ Sanford ມີໂອກາດສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ. ສຳລັບຄົນເຈັບຜູ້ທີ່ບັນລຸເກນເງື່ອນໄຂທີ່ກຳນົດໄວ້ໃນນະໂຍບາຍສະບັບນີ້, Sanford ຈະສະເໜີການຊ່ວຍເຫຼືອທາງດ້ານການເງິນທີ່ສາມາດຫຼຸດຜ່ອນພັນທະທາງດ້ານການເງິນຂອງພວກເຂົາໃນການຊຳລະສຳລັບການບໍລິການເຫຼົ່ານັ້ນ.

**ນິຍາມ:**
ສຳລັບຈຸດປະສົງຂອງນະໂຍບາຍສະບັບນີ້, ນິຍາມດັ່ງຕໍ່ໄປນີ້ຈະມີຄວາມໝາຍ:

**ການດູແລເບິ່ງແຍງ ແລະ ການບໍລິການສຸກເສີນ:** ບຸກຄົນຜູ້ທີ່ສະເໜີຕົວທີ່ພະແນກສຸກເສີນໃດໜຶ່ງຂອງ Sanford ເຊິ່ງກຳລັງຂໍການດູແລເບິ່ງແຍງສຸກເສີນຈະໄດ້ຮັບການກວດສຸຂະພາບທາງການແພດໂດຍບຸກຄົນທາງການແພດທີ່ມີຄຸນສົມບັດເພື່ອຕັດສິນວ່າມີອາການທາງດ້ານການແພດສຸກເສີນຫຼືບໍ່. ອາການທາງການແພດສຸກເສີນເປັນອາການທີ່ສະແດງໃຫ້ເຫັນຢ່າງຊັດເຈນເຊິ່ງລວມທັງອາການເຈັບປວດຢ່າງຮຸນແຮງ, ຄວາມວຸ້ນວາຍກ່ຽວກັບຈິດ ແລະ/ຫຼື ອາການຂອງການເສບສານເສບຕິດ, ເຊິ່ງການບໍ່ມີການຮັກສາທາງການແພດໂດຍທັນທີ ມີແນວໂນ້ມທີ່ຈະເຮັດໃຫ້ເກີດມີຄວາມຜິດປົກກະຕິໃນການເຮັດວຽກ

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

ຫຼື ຂໍ້ບົກພ່ອງທີ່ຮ້າຍແຮງຕໍ່ອະໄວຍະວະຂອງຮ່າງກາຍ ຫຼື ໜ້າທີ່ ຫຼື ອັນຕະລາຍທີ່ຮ້າຍແຮງຕໍ່ສຸຂະພາບຂອງບຸກຄົນ ຫຼື ເດັກທີ່ຍັງຢູ່ໃນທ້ອງແມ່. ກ່ຽວກັບແມ່ຍິງຖືພາທີ່ມີການຕິດເຊື້ອ, ອາການທາງການແພດສຸກເສີນຍັງປະກອບມີສະຖານະການທີ່ບໍ່ມີເວລາພຽງພໍໃນການໂອນຍ້າຍແມ່ຍິງຢ່າງປອດໄພກ່ອນການເກີດລູກ ຫຼື ການໂອນຍ້າຍຈະກໍ່ໃຫ້ເກີດອັນຕະລາຍຕໍ່ບຸກຄົນດັ່ງກ່າວ ຫຼື ລູກທີ່ຢູ່ໃນທ້ອງຂອງລາວ. (ເບິ່ງນະໂຍບາຍ C-855 ຂອງ Sanford, ມາດຕະຖານຂອງການດຳເນີນການທີ່ກ່ຽວຂ້ອງກັບການປະຕິບັດຕາມລະບຽບຂອງ EMTALA).

**ການດູແລເບິ່ງແຍງ ແລະ ການບໍລິການທີ່ມີຄວາມຈຳເປັນທາງການແພດ:** ການດູແລເບິ່ງແຍງ ແລະ ການບໍລິການທີ່ມີຄວາມຈຳເປັນທາງການແພດລວມເອົາວິທີການ ແລະ ການປິ່ນປົວທີ່ມີຄວາມຈຳເປັນເພື່ອວິນິດໄສ ແລະ ສະໜອງໃຫ້ການປິ່ນປົວທີ່ຊ່ວຍປ້ອງກັນພະຍາດ ຫຼື ຊ່ວຍບັນເທົາອາການສຳລັບເງື່ອນໄຂທາງຮ່າງກາຍ ຫຼື ທາງຈິດໃຈໂດຍອີງຕາມມາດຕະຖານຂອງການດູແລເບິ່ງແຍງດ້ານສຸຂະພາບທີ່ໄດ້ຖືກຍອມຮັບຢ່າງມີອາຊີບ.

**ສິ່ງທີ່ບໍ່ຖືກຄຸ້ມຄອງໂດຍການຊ່ວຍເຫຼືອທາງດ້ານການເງິນ:** ຄຳວ່າ "ຈຳເປັນທາງການແພດ" ບໍ່ປະກອບມີຕໍ່ໄປນີ້: ລະບຽບການສັນຍາກຳ, ການຄວບຄຸມກຳເນີດ ຫຼື ການປິ່ນປົວພາວະເປັນໝັນ, ລະບຽບການທີ່ດີແທນກະເພາະອາຫານ, ການບໍລິການທັນຕະກຳທີ່ບໍ່ສຸກເສີນ, ການດູແລເບິ່ງແຍງທີ່ດີລອງ ຫຼື ບໍ່ດັ່ງເດີມ, ການກວດສຸຂະພາບ ຫຼື ການປິ່ນປົວ, ອຸປະກອນຊ່ວຍຟັງ ແລະ ການບໍລິການລາຍຍ່ອຍ ເຊັ່ນ: ຮ້ານໃຫ້ບໍລິການກ່ຽວກັບດວງຕາ ຫຼື ອຸປະກອນທັນຕະກຳ ຫຼື ອຸປະກອນທາງການແພດຕາມເຮືອນ. ສຳລັບຈຸດປະສົງຂອງນະໂຍບາຍນີ້, Sanford ສະຫງວນສິດທີ່ໃນການກຳນົດວ່າການດູແລເບິ່ງແຍງ ແລະ ການບໍລິການຕອບສະໜອງນິຍາມ ແລະ ມາດຕະຖານຂອງຄຳວ່າ "ມີຄວາມຈຳເປັນທາງການແພດ" ສຳລັບຈຸດປະສົງຂອງການມີສິດທີ່ໄດ້ຮັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຕາມພື້ນຖານໃນແຕ່ລະກໍລະນີ ຫຼື ບໍ່.

ການບໍລິການທີ່ໄດ້ຮັບຈາກຜູ້ໃຫ້ບໍລິການດູແລເບິ່ງແຍງທີ່ບໍ່ໄດ້ຖືກຈ້າງໂດຍ Sanford (ເຊັ່ນວ່າ ຜູ້ຊ່ຽວຊານທາງການແພດຂອງເອກະຊົນ ແລະ/ຫຼື ບໍ່ແມ່ນ Sanford ແລະ ທ່ານໝໍ, ລົດໂຮງໝໍທີ່ບໍ່ແມ່ນ FM, ແລະອື່ນໆ.) ຄົນເຈັບຖືກສົ່ງເສີມໃຫ້ຕິດຕໍ່ຫາຜູ້ໃຫ້ບໍລິການເຫຼົ່ານີ້ໂດຍກົງເພື່ອສອບຖາມກ່ຽວກັບການໃຫ້ຄວາມຊ່ວຍເຫຼືອທີ່ມີໃຫ້ໃດໜຶ່ງ ແລະ ເພື່ອຮັດການຕົກລົງການຊຳລະເງິນ. (ເບິ່ງພາກຄັດຕິດ II ສຳລັບລາຍຊື່ທີ່ຄົບຖ້ວນຂອງຜູ້ໃຫ້ບໍລິການທີ່ບໍ່ຖືກຄຸ້ມຄອງພາຍໃຕ້ນະໂຍບາຍນີ້.)

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

**ເກນການມີສິດທີ່ໄດ້ຮັບສຳລັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນ:** ຕາມການກຳນົດຂອງ Sanford ວ່າການດູແລເບິ່ງແຍງ ແລະ ການບໍລິການຂອງຄົນເຈັບຕ້ອງຕອບສະໜອງທັງນິຍາມຂອງຄຳວ່າ "ການດູແລເບິ່ງແຍງ ແລະ ການບໍລິການສຸກເສີນ" ຫຼື "ການດູແລເບິ່ງແຍງ ແລະ ການບໍລິການທີ່ມີຄວາມຈຳເປັນທາງການແພດ" ທີ່ຄົນເຈັບ (ບໍ່ວ່າຈະບໍ່ຖືກຮັບປະກັນ ຫຼື ຖືກຮັບປະກັນໂດຍບຸກຄົນທີສາມກໍ່ຕາມ) ມີສິດທີ່ໄດ້ຮັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນເຕັມສ່ວນ ຫຼື ບາງສ່ວນຕາມເກນຕໍ່ໄປນີ້:

1. ຄົນເຈັບ (ຫຼື ຜູ້ຮັບປະກັນຂອງຄົນເຈັບ) ທີ່ມີລາຍຮັບຂອງຄົວເຮືອນຢູ່ທີ່ 225% ລົງມາຂອງລະດັບຄວາມທຸກຍາກຂອງລັດຖະບານກາງ (FPL) ມີສິດທີ່ໄດ້ຮັບສຳລັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນແບບເຕັມສ່ວນ.
2. ຄົນເຈັບ (ຫຼື ຜູ້ຮັບປະກັນຂອງຄົນເຈັບ) ທີ່ມີລາຍຮັບຂອງຄົວເຮືອນຢູ່ລະຫວ່າງ 226% ແລະ 375% ຂອງ FPL ມີສິດທີ່ໄດ້ຮັບສຳລັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນເປັນບາງສ່ວນຕາມການປັບປ່ຽນມາດຕາສ່ວນ. (ເບິ່ງພາກຄັດຕິດ I ສຳລັບລາຍລະອຽດກ່ຽວກັບການປັບປ່ຽນແຜນການກຳນົດຄ່າທຳນຽມ.)
3. ການມີສິດທີ່ໄດ້ຮັບສຳລັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນແບບເຕັມສ່ວນ ຫຼື ບາງສ່ວນແມ່ນຂຶ້ນຢູ່ກັບການປະກອບໃບສະໝັກຂໍຄວາມຊ່ວຍເຫຼືອທາງດ້ານການເງິນ ແລະ ການສົ່ງເອກະສານຄົບພ້ອມທີ່ Sanford ຮ້ອງຂໍເພື່ອສະແດງໃຫ້ເຫັນຄວາມຕ້ອງການທາງດ້ານການເງິນ. ກໍລະນີທີ່ມີການຍົກເວັ້ນສາມາດສົ່ງຜົນສະທ້ອນຕໍ່ການມີສິດທີ່ໄດ້ຮັບຂອງຄົນເຈັບ (ຫຼື ຂອງຜູ້ຮັບປະກັນ) ສຳລັບການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນ ແລະ ສາມາດຖືກພິຈາລະນາຕາມພື້ນຖານໃນແຕ່ລະກໍລະນີ. ກໍລະນີເຫຼົ່ານີ້ລວມມີ, ແຕ່ວ່າບໍ່ມີຂີດຈຳກັດສະເພາະ:
   - ສະຖານະການຈ້າງງານ
   - ຈຳນວນໜີ້ສິນທັງໝົດ (ທາງການແພດ ແລະ ບໍ່ແມ່ນທາງການແພດ)
   - ຊັບສິນ (ທີ່ສາມາດແລກປ່ຽນເປັນເງິນສົດໄດ້ ແລະ ບໍ່ສາມາດແລກປ່ຽນເປັນເງິນສົດໄດ້) ຫຼາຍກວ່າໜີ້ສິນ
   - ຄວາມເຈັບປ່ວຍທີ່ເຮັດໃຫ້ເຖິງແກ່ຄວາມຕາຍ
   - ລາຍຈ່າຍລາຍເດືອນທັງໝົດ

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

4. ຜູ້ອາໄສຢູ່ໃນມິນນີໂຊຕາທີ່ໄດ້ຮັບການດູແລເບິ່ງແຍງ ແລະ ການບໍລິການສຸກເສີນ ແລະ ມີຄວາມຈໍາເປັນທາງການແພດຢູ່ທີ່ສະຖານທີ່ບໍລິການຂອງໂຮງໝໍຂອງມິນນິໂຊຕາຂອງ Sanford ຍັງມີສິດທິສະໝັກຂໍເອົາສ່ວນຫຼຸດລາຄາພາຍໃຕ້ນະໂຍບາຍສໍາລັບໂຄງການຫຼຸດລາຄາຂອງມິນນິໂຊຕາ. (ເບິ່ງໂຄງການຫຼຸດລາຄາຂອງມິນນິໂຊຕາ - ນະໂຍບາຍການປະກອບທຸລະກິດ)

**ລະບຽບການ:**
**ການຊ່ວຍເຫຼືອທາງດ້ານການເງິນທີ່ມີໃຫ້**

1. Sanford ໃຊ້ຄວາມພະຍາຍາມພ□ສົມຄວນໃນການແຈ້ງໃຫ້ຄົນເຈັບທຸກຄົນ ແລະ ສາທາລະນະຮັບຮູ້ຢ່າງຄົບຖ້ວນກ່ຽວກັບການມີການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນ, ລວມທັງວິທີການຕໍ່ໄປນີ້:
   - ການຕິດປ້າຍປະກາດໃນພື້ນທີ່ລົງທະບຽນຂອງຄົນເຈັບທັງໝົດ ແລະ ໃນພື້ນທີ່ຂອງສະຖານທີ່ບໍລິການສາທາລະນະອື່ນໆ.
   - ຈັດໃຫ້ມີນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ບົດສະຫຼຸບທີ່ໃຊ້ຖ້ອຍຄໍາເຂົ້າໃຈງ່າຍກ່ຽວກັບການຊ່ວຍເຫຼືອທາງດ້ານການເງິນ ແລະ ໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນຢູ່ທີ່ພະແນກການລົງທະບຽນ.
   - ຕິດປະກາດກ່ຽວກັບຂໍ້ມູນ, ລວມທັງບົດສະຫຼຸບທີ່ໃຊ້ຖ້ອຍຄໍາເຂົ້າໃຈງ່າຍກ່ຽວກັບການຊ່ວຍເຫຼືອທາງດ້ານການເງິນ, ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນໃນເວັບໄຊ [Sanfordhealth.org](Sanfordhealth.org).
   - ການສະໜອງໃຫ້ການແຈ້ງເຕືອນທີ່ເປັນລາຍລັກອັກສອນໃນຄໍາຖະແຫຼງການກ່ຽວກັບການຮຽກເກັບເງິນຂອງຄົນເຈັບກ່ຽວກັບການມີການຊ່ວຍເຫຼືອທາງດ້ານການເງິນ ແລະ ຄໍາແນະນໍາກ່ຽວກັບວິທີການສະໝັກຂໍ.
   - ການເອົ້າເຖິງການມີການຊ່ວຍເຫຼືອທາງດ້ານການເງິນໃນເວລາປຶກສາຫາລືກ່ຽວກັບໃບເກັບເງິນຜ່ານທາງໂທລະສັບກັບຄົນເຈັບ ຫຼື ຜູ້ຮັບປະກັນ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນໍາໃຊ້ສໍາລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

- ການສະໜອງໃຫ້ການແຈ້ງເຕືອນທີ່ເປັນລາຍລັກອັກສອນໃນໃບໂຄສະນາສິນຄ້າ ແລະ ຂໍ້ມູນອື່ນໆທີ່ຖືກສະໜອງໃຫ້ແກ່ຄົນເຈັບເມື່ອເຂົ້າມາ ຫຼື ອອກໄປ.
- ການສະໜອງໃຫ້ຂໍ້ມູນແກ່ໜ່ວຍງານໃຫ້ບໍລິການສັງຄົມປະຈຳທ້ອງຖິ່ນ.

2. Sanford ໃຊ້ຄວາມພະຍາຍາມພໍສົມຄວນເພື່ອຊ່ວຍເອົາຊະນະອຸປະສັກທາງດ້ານພາສາ ຫຼື ຄວາມພິການໃດໜຶ່ງທີ່ສາມາດໃຊ້ເປັນສິ່ງກີດຂວາງຕໍ່ການແຈ້ງໃຫ້ຄົນເຈັບ ແລະ ຜູ້ຮັບປະກັນຮັບຮູ້ກ່ຽວກັບການມີການຊ່ວຍເຫຼືອທາງດ້ານການເງິນ, ລວມທັງ:
   - ປ້າຍໂຄສະນາຫຼາກຫຼາຍພາສາເປັນພາສາອັງກິດ ແລະ ເປັນພາສາອື່ນໆໃດໜຶ່ງທີ່ລວມກັນເປັນພາສາຫຼັກຢ່າງໜ້ອຍ 5% ຫຼື ເກີນຂອງປະຊາຊົນຈຳນວນ 1000 ຄົນໃນຊຸມຊົນບ່ອນທີ່ສະຖານທີ່ລິການຖືກຕັ້ງຢູ່.
   - ຂໍ້ມູນຫຼາກຫຼາຍພາສາໃນເວັບໄຊ Sanfordhealth.org ເປັນພາສາອັງກິດ ແລະ ເປັນພາສາອື່ນໆໃດໜຶ່ງທີ່ລວມກັນເປັນພາສາຫຼັກຢ່າງໜ້ອຍ 5% ຫຼື ເກີນຂອງປະຊາຊົນຈຳນວນ 1000 ຄົນໃນຊຸມຊົນທ້ອງຖິ່ນບ່ອນທີ່ສະຖານທີ່ບໍລິການຂອງ Sanford ຖືກຕັ້ງຢູ່.
   - ການສະໜອງໃຫ້ນາຍພາສາຕາມຄຳຮ້ອງຂໍຂອງຄົນເຈັບ ຫຼື ຜູ້ຮັບປະກັນຂອງຄົນເຈັບເພື່ອຕອບສະໜອງທັງຄວາມຕ້ອງການທາງດ້ານພາສາ ຫຼື ຄວາມພິການ.
3. ນະໂຍບາຍການໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຂອງ Sanford, ໃບສະໝັກຂໍຄວາມຊ່ວຍເຫຼືອທາງດ້ານການເງິນ, ແລະ ບົດສະຫຼຸບທີ່ໃຊ້ຖ້ອຍຄຳເຂົ້າໃຈງ່າຍແມ່ນມີໃຫ້ໂດຍບໍ່ເສຍຄ່າ, ເປັນພາອັງກິດ (ຫຼື ເປັນພາສາອື່ນໆໃດໜຶ່ງທີ່ລວມກັນເປັນພາສາຫຼັກຢ່າງໜ້ອຍ 5% ຫຼື ເກີນຂອງປະຊາຊົນຈຳນວນ 1000 ຄົນໃນຊຸມຊົນບ່ອນທີ່ສະຖານທີ່ບໍລິການຂອງ Sanford ຖືກຕັ້ງຢູ່□□). ບຸກຄົນສາມາດຮັບເອົາເອກະສານເຫຼົ່ານີ້ຜ່ານທາງວິທີການດັ່ງຕໍ່ໄປນີ້:
   - ສຳເນົາສະບັບເຈ້ຍສາມາດຖືກສະໜອງໃຫ້ດ້ວຍຕົນເອງ ຫຼື ສາມາດຖືກສົ່ງທາງໄປສະນີໃຫ້ແກ່ຄົນເຈັບຕາມຄຳຮ້ອງຂໍ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

- ສຳເນົາສະບັບເຈ້ຍສາມາດຖືກເຂົ້າເຖິງ, ຖືກດາວໂຫຼດ, ແລະ ຖືກອັດພິມອອກມາຈາກເວັບໄຊ (Sanfordhealth.org).

4. ເມື່ອ Sanford ໄດ້ສະໜອງໃຫ້ການບໍລິການສຸກເສີນ ຫຼື ທີ່ມີຄວາມຈຳເປັນທາງການແພດແລ້ວ, ຄົນເຈັບ ຫຼື ຜູ້ຮັບປະກັນສາມາດສົ່ງໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນໄດ້. ສິດທິໃນການສະໝັກຂໍເອົາການພິຈາລະນາກ່ຽວກັບການຊ່ວຍເຫຼືອທາງດ້ານການເງິນເລີ່ມຕົ້ນຂຶ້ນໃນວັນທີໃຫ້ບໍລິການ ແລະ ຂະຫຍາຍເວລາຈົນເຖິງ 240 ມື້ ຫຼັງຈາກຄຳຖະແຫຼງການກ່ຽວກັບການຮຽກເກັບເງິນສະບັບທຳອິດຖືກສົ່ງໄປຍັງຄົນເຈັບ ຫຼື ຜູ້ຮັບປະກັນ. ເຖິງຢ່າງໃດກໍ່ຕາມ, ຄົນເຈັບ ແລະ ຜູ້ຮັບປະກັນກໍ່ຖືກສົ່ງເສີມໃຫ້ສົ່ງໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນຂອງເຂົາເຈົ້າໃຫ້ໄວເທົ່າທີ່ຈະໄວໄດ້.
5. Sanford ສະໜອງການຊ່ວຍເຫຼືອໃນການປະກອບໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນແກ່ຄົນເຈັບຄົນໃດຄົນໜຶ່ງທີ່ຕ້ອງການ ຫຼື ຮ້ອງຂໍຄວາມຊ່ວຍເຫຼືອ. ຄົນເຈັບ (ຫຼື ຜູ້ຮັບປະກັນຂອງຄົນເຈັບ) ສາມາດຕິດຕໍ່ຝ່າຍບໍລິການທາງດ້ານການເງິນສຳລັບຄົນເຈັບຂອງ Sanford ໄດ້ທີ່ 877.629.2999 ເພື່ອຂໍຄວາມຊ່ວຍເຫຼືອນີ້. ຄົນເຈັບຍັງສາມາດເຂົ້າໄປທີ່ພະແນກການລົງທະບຽນ ຫຼື ສະຖານທີ່ຮັບສະໝັກໃດໜຶ່ງ ແລ້ວເຂົາເຈົ້າຈະຖືກນຳໄປຍັງສະຖານທີ່ທີ່ໃກ້ທີ່ສຸດສຳລັບຄົນໃດຄົນໜຶ່ງເພື່ອຊ່ວຍໃນການປະກອບໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ.

**ການດຳເນີນການສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ**

1. ຄົນເຈັບ (ຫຼື ຜູ້ຮັບປະກັນຂອງຄົນເຈັບ) ທີ່ກຳລັງຊອກຫາການໃຫ້ການຊ່ວຍເຫຼືອທາງດ້ານການເງິນມີຄວາມຮັບຜິດຊອບຕໍ່ໄປນີ້:
   - ປະກອບ, ລົງລາຍເຊັນ, ແລະ ສົ່ງໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ.
   - ສົ່ງເອກະສານໃຫ້ຄົບພຽງພໍເພື່ອພິສູດໃຫ້ເຫັນຄວາມຕ້ອງການທາງດ້ານການເງິນ, ລວມທັງເອກະສານ ເຊັ່ນ: ໃບແຈ້ງລາຍຮັບເພື່ອເສຍພາສີ IRS ທີ່ຍື່ນຫຼ້າສຸດ, ສົ້ນໃບຮັບເງິນເດືອນສອງເດືອນຫຼ້າສຸດ,

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

ແລະ ຄຳຖະແຫຼງການກ່ຽວກັບຄ່າພາສີຊັບສິນສຳລັບຊັບສິນທີ່ເປັນຂອງເຈົ້າຂອງແທ້ຈິງ.

- ຕອບສະໜອງຕໍ່ການຕິດຕາມບັນຫາ ແລະ ຄຳຮ້ອງຂໍຂໍ້ມູນເພີ່ມເຕີມ ເພື່ອໃຫ້ Sanfordສາມາດປະເມີນການມີສິດທີ່ໄດ້ຮັບສຳລັບການຊ່ວຍເຫຼືອທາງດ້ານການເງິນໄດ້ຢ່າງຖືກຕ້ອງ ແລະ ທັນເວລາ.
- ແກ້ໄຂ ແລະ ຈັດການກັບບັນຫາທີ່ຍັງຄ້າງຄາໃດໜຶ່ງໃຫ້ສຳເລັດຮ່ວມກັບຜູ້ຮັບປະກັນໄພ ແລະ ຜູ້ຈ່າຍເງິນຂອງບຸກຄົນທີສາມທີ່ມີຄວາມເໝາະສົມ ເພື່ອໃຫ້ Sanford ສາມາດດຳເນີນກັບການດຳເນີນການສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ.
- ການຮ່ວມມືໃນການສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນອື່ນໆທີ່ມີໃຫ້ຜ່ານທາງໜ່ວຍງານຂອງລັດ ຫຼື ທ້ອງຖິ່ນ ຖ້າຫາກມີຄຸນສົມບັດເໝາະສົມພາຍໃຕ້ເກນການມີສິດທີ່ໄດ້ຮັບຂອງໂຄງການດັ່ງກ່າວ.

2. ຄົນເຈັບ (ຫຼື ຜູ້ຮັບປະກັນຂອງຄົນເຈັບ) ຖືກຄາດຫວັງໃນການຮ່ວມມື ແລະ ສົ່ງເອກະສານ ແລະ ຂໍ້ມູນທີ່ຈຳເປັນໃນເວລາທີ່ເໝາະສົມ. ໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນຈະບໍ່ຖືກຖືວ່າແລ້ວສົມບູນຈົນກວ່າເຖິງເວລາທີ່ຄົນເຈັບຫຼື ຜູ້ຮັບປະກັນສົ່ງເອກະສານທີ່ຈຳເປັນທັງໝົດ. Sanford ໃຫ້ໄລຍະເວລາທີ່ເໝາະສົມແກ່ຄົນເຈັບ ແລະ ຜູ້ຮັບປະກັນ ເພື່ອສົ່ງເອກະສານສະໜັບສະໜູນ ແລະ ເພື່ອຕອບສະໜອງການຕິດຕາມຄຳຮ້ອງຂໍ. ໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນທີ່ຍັງຄ້າງຄາ ຫຼື ທີ່ຍັງບໍ່ທັນປະກອບແລ້ວຈະຖືກຍົກເລີກຖ້າຫາກຄົນເຈັບ ຫຼື ຜູ້ຮັບປະກັນ:
    - ບໍ່ສາມາດສົ່ງເອກະສານສະໜັບສະໜູນທີ່ຈຳເປັນທັງໝົດພາຍໃນ 30 ມື້, ຫຼື
    - ບໍ່ສາມາດຕອບສະໜອງການຕິດຕາມບັນຫາ ແລະ ຄຳຮ້ອງຂໍໃດໜຶ່ງພາຍໃນ 30 ມື້
3. ໃນກໍລະນີທີ່ຄົນເຈັບ ຫຼື ຜູ້ຮັບປະກັນສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນຫຼັງຈາກທີ່ບັນຊີທີ່ຄ້າງຊຳລະໄດ້ຖືກສະເໜີຕໍ່ໜ່ວຍງານຮຽກເກັບໜີ້ພາຍນອກ, Sanford ຈະລະເວັ້ນຈາກການດຳເນີນການຮຽກເກັບໜີ້ພິເສດໃດໜຶ່ງໃນຂະນະທີ່ໃບສະໝັກຍັງບໍ່ທັນປະກອບແລ້ວ ແລະ ກຳລັງຖ້າເອກະສານທີ່ຈຳເປັນທັງໝົດ. ເຖິງຢ່າງໃດກໍຕາມ, ໃນກໍລະນີທີ່ໃບສະໝັກຂໍ

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

ການຊ່ວຍເຫຼືອທາງດ້ານການເງິນທີ່ຍັງຄ້າງຄາຖືກຍົກເວັ້ນສຳລັບເຫດຜົນທີ່ລະບຸໄວ້ໃນອັກຂ້າງເທິງ, ບັນຊີທີ່ຄ້າງຊຳລະຈະຂຶ້ນກັບຂໍ້ກຳນົດ ແລະ ບົດບັນຍັດຂອງນະໂຍບາຍການຮຽກເກັບໜີ້ຂອງ Sanford.

4. ເມື່ອໄດ້ຮັບໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນທີ່ຖືກຖືວ່າ "ແລ້ວສົມບູນ", Sanford ຈະ:
   - ງົດກິດຈະກຳການຮຽກເກັບໜີ້ທັງໝົດຈົນກວ່າເຖິງເວລາທີ່ Sanford ເຮັດການກຳນົດສຸດທ້າຍກ່ຽວກັບການມີສິດທິໄດ້ຮັບສຳລັບການຊ່ວຍເຫຼືອທາງດ້ານການເງິນ.
   - ເຮັດການກຳນົດກ່ຽວກັບການມີສິດທິໄດ້ຮັບສຳລັບການຊ່ວຍເຫຼືອທາງດ້ານການເງິນພາຍໃນ 30 ມື້ນັບຈາກທີ່ໄດ້ຮັບໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນທີ່ປະກອບແລ້ວສົມບູນ.
   - ແຈ້ງໃຫ້ຄົນເຈັບ (ຫຼືຜູ້ຮັບປະກັນ) ຮັບຮູ້ໂດຍທາງໄປສະນີພາຍໃນ 30 ມື້ກ່ຽວກັບການກຳນົດຂອງ Sanford ໃນການອະນຸມັດ ຫຼື ປະຕິເສດໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ.
   - ໃນກໍລະນີຢູ່ບ່ອນທີ່ການຊ່ວຍເຫຼືອທາງດ້ານການເງິນແບບເຕັມສ່ວນ ຫຼື ບາງສ່ວນຖືກອະນຸມັດ, ເຮັດການປັບປ່ຽນໃນບັນຊີທີ່ເໝາະສົມເພື່ອໃຫ້ສອດຄ່ອງກັບເປີເຊັນ ແລະ ຈຳນວນເງິນຂອງການຊ່ວຍເຫຼືອທາງດ້ານການເງິນ.
5. ຂຶ້ນກັບເສລີພາບໃນການຕັດສິນໃຈຂອງ Sanford, ເມື່ອຄົນເຈັບ ຫຼື ຜູ້ຮັບປະກັນໄດ້ມີຄຸນສົມບັດເໝາະສົມສຳລັບການການຊ່ວຍເຫຼືອທາງດ້ານການເງິນ, ການມີສິດທິໄດ້ຮັບສາມາດຖືກຂະຫຍາຍໄລຍະເວລາອອກຈົນເຖິງຂີດສູງສຸດຫົກເດືອນນັບຈາກວັນທີໄດ້ຮັບການອະນຸມັດເພື່ອຄຸ້ມຄອງການດູແລເປິ່ງແຍງ ຫຼື ການບໍລິການທີ່ມີເງື່ອນໄຂຖືກຕ້ອງໃນອະນາຄົດ. ເພື່ອໃຫ້ມີສິດທິໄດ້ຮັບໄລຍະເວລາທີ່ຂະຫຍາຍອອກ, Sanford ສາມາດຮ້ອງຂໍຄົນເຈັບ ຫຼື ຜູ້ຮັບປະກັນໃນການສະໜອງໃຫ້ຂໍ້ມູນທາງດ້ານການເງິນທີ່ມີການປັບປຸງ.
6. ການຊ່ວຍເຫຼືອທາງດ້ານການເງິນສາມາດຖືກໃຫ້ສຳລັບການບໍລິການ ແລະ ການດູແລເປິ່ງແຍງທີ່ຖືກດຳເນີນການໂດຍຜູ້ໃຫ້ບໍລິການຂອງ Sanford

## ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

ຫຼື ຖືກສົ່ງໃບເກັບເງິນສຳລັບສະຖານທີ່ຂອງ Sanford ຜ່ານສຳນັກງານການຮຽກເກັບເງິນທີ່ຮວມອຳນາດມາສູນກາງ, ການບໍລິການທາງດ້ານການເງິນສຳລັບຄົນເຈັບເທົ່ານັ້ນ.

7. ການບໍລິການທີ່ໄດ້ຮັບຈາກຜູ້ໃຫ້ບໍລິການດູແລເບິ່ງແຍງທີ່ບໍ່ໄດ້ຖືກຈ້າງໂດຍ Sanford (ເຊັ່ນວ່າ ຜູ້ຊ່ຽວຊານທາງການແພດຂອງເອກະຊົນ ແລະ/ຫຼື ບໍ່ແມ່ນ Sanford ແລະ ທ່ານໝໍ, ລົດໂຮງໝໍທີ່ບໍ່ແມ່ນ FM, ແລະອື່ນໆ.) ຄົນເຈັບຖືກສົ່ງເສີມໃຫ້ຕິດຕໍ່ຫາຜູ້ໃຫ້ບໍລິການເຫຼົ່ານັ້ນໂດຍກົງ ເພື່ອສອບຖາມກ່ຽວກັບການໃຫ້ຄວາມຊ່ວຍເຫຼືອທີ່ມີໃຫ້ໃດໜຶ່ງ ແລະ ເພື່ອຮັດການຕົກລົງການຊຳລະເງິນ. (ເບິ່ງພາກຄັດຕິດ II ສຳລັບລາຍຊື່ທີ່ຄົບຖ້ວນຂອງຜູ້ໃຫ້ບໍລິການທີ່ບໍ່ຖືກຄຸ້ມຄອງພາຍໃຕ້ນະໂຍບາຍນີ້.)
8. Sanford ຈະຮັກສາໃບສະໝັກຂໍການຊ່ວຍເຫຼືອທາງດ້ານການເງິນ ແລະ ເອກະສານສະໜັບສະໜູນທັງໝົດໄວ້ເປັນຄວາມລັບ ແລະ ສາມາດແບ່ງປັນຂໍ້ມູນນີ້ຢູ່ນອກ Sanford ໄດ້ສະເພາະເມື່ອມີການຮ້ອງຂໍທີ່ເປັນລາຍລັກອັກສອນ ຫຼື ດ້ວຍອາຈາຈາກຄົນເຈັບ ຫຼື ຜູ້ຮັບປະກັນ, ຫຼື ເມື່ອມີການຮ້ອງຂໍຈາກຜູ້ກວດບັນຊີພາຍນອກຂອງ Sanford, ໜ່ວຍງານຮຽກເກັບໜີ້, ຫຼື ບໍລິສັດໃຫ້ຄຳປຶກສາທາງກົດໝາຍ.

**ການກຳນົດການຊ່ວຍເຫຼືອທາງດ້ານການເງິນທີ່ເປັນການສັນນິຖານ (ໂດຍບໍ່ຕ້ອງມີໃບສະໝັກ)**

1. Sanford Health ສາມາດນຳໃຊ້ບຸກຄົນທີສາມເພື່ອດຳເນີນການທົບທວນອີເລັກໂທຣນິກກ່ຽວກັບຂໍ້ມູນຂອງຄົນເຈັບເພື່ອປະເມີນຄວາມຕ້ອງການທາງດ້ານການເງິນ. ການທົບທວນຄືນນີ້ໃຊ້ຮູບແບບອຸດສາຫະກຳທີ່ໄດ້ຮັບການຍອມຮັບຂອງ healthcare ທີ່ອີງຕາມຖານຂໍ້ມູນສະຖິຕິຂອງລັດ. ຮູບແບບການຄາດເດົານີ້ລວມເຂົ້າໃນຂໍ້ມູນສະຖິຕິຂອງລັດເພື່ອຄຳນວນສະຖານະທາງເສດຖະກິດສັງຄົມ ແລະ ການໃຫ້ຄະແນນຄວາມສາມາດທາງດ້ານການເງິນ. ການໃຫ້ຄະແນນການຄາດເດົາ ແລະ ລາຍຮັບໂດຍປະມານ, ການປະເມີນຄ່າຊັບສິນ, ແລະ ສະພາບເງິນຄ່ອງ.
2. ການຊ່ວຍເຫຼືອມີໃຫ້ພາຍໃຕ້ຮູບແບບການຄາດເດົາຖືກກຳນົດຢູ່ທີ່ເກນຕ່ຳສຸດສຳລັບການສະເໜີໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນແບບເຕັມສ່ວນ. ເຖິງຢ່າງໃດກໍ່ຕາມ, ມັນບໍ່ຖືກໃຊ້ສຳລັບການກຳນົດກ່ຽວກັບການຊ່ວຍເຫຼືອບາງສ່ວນ.
3. ຮູບແບບການຄາດເດົາສາມາດຖືກໃຊ້ເພື່ອເພີ່ມຕື່ມໃສ່ໃບສະໝັກທີ່ຍັງບໍ່ປະກອບແລ້ວສຳລັບການກຳນົດການຊ່ວຍເຫຼືອທາງດ້ານການເງິນແບບສົມບູນ ຫຼື ບາງສ່ວນ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດພະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

**ການຊ່ວຍເຫຼືອທາງດ້ານການເງິນແບບເຕັມສ່ວນ ຫຼື ບາງສ່ວນ**

1. ສຳລັບຄົນເຈັບ ຫຼື ຜູ້ຮັບປະກັນຜູ້ທີ່ຖືກຖືວ່າມີຄຸນສົມບັດເໝາະສົມສຳລັບການຊ່ວຍເຫຼືອທາງດ້ານການເງິນແບບເຕັມສ່ວນ, Sanford ຈະສົ່ງການແຈ້ງເຕືອນທີ່ເປັນລາຍລັກອັກສອນທາງໄປສະນີພາຍໃນ 30 ມື້ກ່ຽວກັບການກຳນົດນັ້ນ.
2. ສຳລັບຄົນເຈັບ (ຫຼື ຜູ້ຮັບປະກັນ) ຜູ້ທີ່ຖືກຖືວ່າມີຄຸນສົມບັດເໝາະສົມສຳລັບການຊ່ວຍເຫຼືອທາງດ້ານການເງິນບາງສ່ວນ, Sanford (ຫຼື ໜ່ວຍງານຮຽກເກັບໜີ້ພາຍນອກຂອງ Sanford ຖ້າຫາກບັນຊີຂອງຄົນເຈັບໄດ້ຖືກສະເໜີຕໍ່ການຮຽກເກັບໜີ້) ຈະສົ່ງໃບເກັບເງິນໄປຍັງຄົນເຈັບ ຫຼື ຜູ້ຮັບປະກັນທີ່ສົ່ງຜົນຕໍ່ສ່ວນຫຼຸດລາຄາສຳລັບການຊ່ວຍເຫຼືອທາງດ້ານການເງິນບາງສ່ວນ. ໃນກໍລະນີເຫຼົ່ານີ້, ຈຳນວນເງິນທີ່ຖືກຍອມຮັບສຳລັບການຊຳລະສຳລັບການດູແລເບິ່ງແຍງສຸກເສີນ ຫຼື ທີ່ມີຄວາມຈຳເປັນທາງການແພດອື່ນໆຈະບໍ່ເກີນກວ່າຈຳນວນເງິນທີ່ Sanford ຍອມຮັບເປັນ "ການຊຳລະເຕັມສ່ວນ" ສຳລັບການບໍລິການດຽວກັນທີ່ສະໜອງໃຫ້ແກ່ຄົນເຈັບຜູ້ທີ່ຖືກຮັບປະກັນໂດຍຜູ້ຈ່າຍເງິນຂອງບຸກຄົນທີສາມ (ລວມທັງ Medicare ແລະ ຜູ້ຮັບປະກັນໄພດ້ານສຸຂະພາບທີ□ເປັນຂອງເອກະຊົນທັງໝົດ). ນີ້ລວມກັນເປັນການຫຼຸດຍອດເງິນເຫຼືອທີ່ຄ້າງຊຳລະຕໍ່ກັບຈຳນວນເງິນທີ່ຮຽກເກັບໂດຍທົ່ວໄປ (AGB) ເປັນຈຳນວນສູງສຸດສຳລັບຄົນເຈັບຄົນໃດຄົນໜຶ່ງທີ່ມີຄຸນສົມບັດເໝາະສົມພາຍໃຕ້ນະໂຍບາຍໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຂອງ Sanford Health. Sanford ຈະສົ່ງການແຈ້ງເຕືອນທີ່ເປັນລາຍລັກອັກສອນທາງໄປສະນີພາຍໃນ 30 ມື້ກ່ຽວກັບການກຳນົດນັ້ນທີ່ສະໜອງໃຫ້ການຢືນຢັນກ່ຽວກັບການຊ່ວຍເຫຼືອທີ່ໃຫ້ ແລະ ຄຳແນະນຳກ່ຽວກັບວິທີການຈ່າຍຍອດເງິນທີ່ຍັງເຫຼືອ ຫຼື ສ້າງແຜນການຊຳລະເງິນທີ່ເໝາະສົມ.
    - ຈຳນວນເງິນທີ່ຖືກຮຽກເກັບໂດຍທົ່ວໄປ (AGB)
      ສຳລັບຄົນເຈັບທີ່ມີການປະກັນໄພມີສອງອົງປະກອບ:
      ຈຳນວນທີ່ຈຳເປັນຕ້ອງຖືກຊຳລະໂດຍຜູ້ປະກັນໄພທີ່ເປັນບຸກຄົນທີສາມ **ບວກ** ຈຳນວນທີ່ຈຳເປັນຕ້ອງຖືກຊຳລະໂດຍຄົນເຈັບ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດພະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

- ຈຳນວນຫຼຸດລາຄາຂອງ AGB ຖືກກຳນົດໂດຍ Sanford ໂດຍການໃຊ້ການຄຳນວນຄ່າສະເລ່ຍທີ່ມີການຊ່ວງຊາກບ່ອນກັບສ່ວນຫຼຸດລາຄາທີ່ສະໜອງໃຫ້ແກ່ Medicare ແລະ ຜູ້ຮັບປະກັນໄພດ້ານສຸຂະພາບເຊີງພານິດທີ່ເປັນຂອງເອກະຊົນທັງໝົດ. ຈຳນວນຫຼຸດລາຄາຂອງ AGB ຖືກກຳນົດທຸກໆສິບສອງເດືອນໂດຍການວິເຄາະຄຳຮ້ອງທຸກທີ່ເກີດຂຶ້ນຈິງທີ່ຖືກຈ່າຍໃຫ້ແກ່ Sanford ໂດຍຄົນເຈັບທີ່ຖືກຮັບປະກັນ ແລະ ຜູ້ຈ່າຍເງິນຂອງບຸກຄົນທີສາມຂອງເຂົາເຈົ້າສຳລັບສິບສອງເດືອນກ່ອນໜ້ານີ້.
- (ເບິ່ງພາກຄັດຕິດ III ສຳລັບຈຳນວນຫຼຸດລາຄາໃນປະຈຸບັນທີ່ມີຜົນຕາມຂົງເຂດ.)

## ວິທີປະຕິບັດສຳລັບການຮຽກເກັບໜີ້

1. Sanford ຄາດຫວັງການຊຳລະເງິນຈາກຄົນເຈັບ ແລະ ຜູ້ຮັບປະກັນຜູ້ທີ່ມີຄວາມສາມາດໃນການຈ່າຍ. ໃນກໍລະນີທີ່ຄົນເຈັບ ຫຼື ຜູ້ຮັບປະກັນດັ່ງກ່າວບໍ່ສາມາດ ຫຼື ປະຕິເສດໃນການປະຕິບັດຕາມຄວາມຮັບຜິດຊອບທາງດ້ານການເງິນ, Sanford ສາມາດມີສ່ວນຮ່ວມໃນການດຳເນີນການຮຽກເກັບໜີ້ ລວມທັງການສົ່ງຕໍ່ບັນຊີທີ່ຄ້າງຊຳລະໃຫ້ແກ່ໜ່ວຍງານຮຽກເກັບໜີ້ພາຍນອກ. Sanford ຈະບໍ່ມີສ່ວນຮ່ວມໃນການດຳເນີນການຮຽກເກັບໜີ້ພິເສດກ່ອນທີ່ຈະໃຊ້ຄວາມພະຍາຍາມຕາມຄວາມເໝາະສົມໃນການກຳນົດວ່າບຸກຄົນຜູ້ທີ່ມີບັນຊີຄ້າງຊຳລະຈະມີສິດທີ່ໄດ້ຮັບສຳລັບການຊ່ວຍເຫຼືອທາງດ້ານການເງິນ ຫຼື ບໍ່. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາອ້າງອີງໃສ່ການຈັດເກັບໜີ້ຂອງ Sanford -ນະໂຍບາຍກິດຈະການ.
2. ນຳໃຊ້ລິ້ງນີ້ເພື່ອເຂົ້າເຖິງ: ການຈັດເກັບໜີ້ - ກິດຈະການ

## ການບໍລິຫານຈັດການຂອງນະໂຍບາຍນີ້

1. ມັນແມ່ນຄວາມຮັບຜິດຊອບຂອງແຕ່ລະໜ່ວຍງານບໍລິການຂອງ Sanford ໃນການພັດທະນາວິທີການດຳເນີນການໃນທ້ອງຖິ່ນ ເພື່ອບໍລິຫານຈັດການ ແລະ ຕອບສະໜອງນະໂຍບາຍນີ້, ລວມທັງສິ່ງຕໍ່ໄປນີ້:

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດພະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

- ການກຳນົດຂໍ້ກຳນົດທີ່ມີຫຼາກຫຼາຍພາສາໃນທ້ອງຖິ່ນສຳລັບການຕິດປ້າຍປະກາດ ແລະ ເອກະສານອື່ນໆ, ແລະ ການຈັດຕຽມສຳລັບນາຍພາສາ.
- ການສຶກສາ ແລະ ການຝຶກອົບຮົມຂອງພະນັກງານເພື່ອໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ຄົນເຈັບໃນສະຖານທີ່ຂອງເຂົາເຈົ້າ.
- ວິທີການຕິດຕາມ ແລະ ຫຼັກການປັບປ່ຽນບັນຊີສຳລັບໜ່ວຍງານບໍລິການຂອງ Sanford ທີ່ບໍ່ນຳໃຊ້ໜ້າທີ່ໃນການຮຽກເກັບເງິນທີ່ຮອມອຳນາດມາສູນກາງ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

**ພາກຄັດຕິດ I – ການປັບປ່ຽນລາຍການສ່ວນຫຼຸດລາຄາເພື່ອຂໍຄວາມຊ່ວຍເຫຼືອ**

ຕາຕະລາງເວລາສ່ວນຫຼຸດຕາມລະດັບສຳລັບການຊ່ວຍເຫຼືອ

*ການຊ່ວຍເຫຼືອທາງດ້ານການເງິນສາມາດຖືກພິຈາລະນາຕາມພື້ນຖານໃນແຕ່ລະກໍລະນີໃນເວລາທີ່ Sanford ໄດ້ຮັບເອກະສານເພີ່ມເຕີມເພື່ອຮອງຮັບຄວາມຍາກລຳບາກທີ່ເງື່ອນໄຂທາງການແພດໄດ້ກໍ່ໃຫ້ເກີດກັບຄົນເຈັບ ແລະ ຄອບຄົວ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

## ພາກຄັດຕິດ II – ລະບຸລາຍຊື່ຂອງຜູ້ໃຫ້ບໍລິການ ແລະ ສະຖານທີ່ບໍລິການທີ່ຖືກຄຸ້ມຄອງພາຍໃຕ້ນະໂຍບາຍໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຂອງ Sanford ແລະ ລະບຸລາຍຊື່ຂອງຜູ້ໃຫ້ບໍລິການທີ່ບໍ່ຖືກຄຸ້ມຄອງພາຍໃຕ້ນະໂຍບາຍໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຂອງ Sanford

ກະລຸນາເບິ່ງບັນຊີລາຍຊື່ທີ່ຄັດຕິດ.

- ບັນຊີລາຍຊື່ທຳອິດໝາຍເຖິງຜູ້ໃຫ້ບໍລິການ ແລະ ສະຖານທີ່ບໍລິການທີ່ຢູ່ພາຍໃຕ້ນະໂຍບາຍໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຂອງ Sanford.
- ບັນຊີລາຍຊື່ທີສອງໝາຍເຖິງຜູ້ໃຫ້ບໍລິການທີ່ສະໜອງໃຫ້ການບໍລິການຢູ່ທີ່ສະຖານທີ່ບໍລິການຂອງ Sanford ທີ່ມີເງື່ອນໄຂຖືກຕ້ອງ, ແຕ່ວ່າການສົ່ງໃບເກັບເງິນສຳລັບການບໍລິການຂອງຜູ້ຊ່ຽວຊານເຫຼົ່ານີ້ບໍ່ຖືກສະໜອງໃຫ້ຜ່ານສຳນັກງານໃຫ້ບໍລິການທາງດ້ານການເງິນສຳລັບຄົນເຈັບທີ່ຮວມອຳນາດມາສູນກາງ. ເພາະສະນັ້ນ, ການບໍລິການເຫຼົ່ານີ້ບໍ່ຢູ່ພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນຂອງ Sanford.

Providers covered by Sanford FAP- Enterprise

Providers not covered by Sanford FAP- Enterprise

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

## ພາກຄັດຕິດ III – ສ່ວນຫຼຸດລາຄາຕ່າສຸດຂອງຈຳນວນເງິນທີ່ຖືກຮຽກເກັບໂດຍທົ່ວໄປ (AGB) ສຳລັບຄົນເຈັບທີ່ມີສິດທິໄດ້ຮັບຄວາມຊ່ວຍເຫຼືອທາງດ້ານການເງິນ

### ສ່ວນຫຼຸດລາຄາຂອງຈຳນວນເງິນທີ່ຖືກຮຽກເກັບໂດຍທົ່ວໄປ (AGB-ການປະກອບທຸລະກິດ

Sanford Health ຄຳນວນສ່ວນຫຼຸດລາຄາຂອງຈຳນວນເງິນທີ່ຖືກຮຽກເກັບໂດຍທົ່ວໄປ (AGB) ໂດຍການນຳໃຊ້ວິທີການທີ 1: ວິທີການຄິດຄືນຫຼັງ. Sanford ໃຊ້ເປີເຊັນສ່ວນຫຼຸດລາຄາທາງປະຫວັດສາດໂດຍການຄຳນວນການປັບບ່ອນຈຳນວນເງິນທີ່ໄດ້ຮັບອະນຸຍາດຕາມສັນຍາໂດຍສະເລ່ຍທີ່ໃຊ້ໄດ້ກັບການບໍລິການດູແລເບິ່ງແຍງສຸກເສີນ ແລະ ທີ່ມີຄວາມຈຳເປັນທາງການແພດອື່ນໆ ເຊິ່ງໃຊ້ການຮ່ວມກັນຂອງ Medicare ແລະ ຜູ້ຮັບປະກັນໄພຂອງບຸກຄົນທີສາມທີ່ເປັນຂອງເອກະຊົນ. ພາຍໃຕ້ວິທີການນີ້, Sanford ແບ່ງຈຳນວນເງິນທີ່ໄດ□ຮັບອະນຸຍາດ (ລວມທັງສ່ວນແບ່ງຄວາມຮັບຜິດຊອບຂອງຄົນເຈັບ) ເປັນຊ່ວງໄລຍະສິບສອງເດືອນໂດຍລາຄາທັງໝົດເພື່ອກຳນົດເປີເຊັນຂອງລາຄາທີ່ລວມກັນເປັນຈຳນວນເງິນທີ່ຖືກຮຽກເກັນໂດຍທົ່ວໄປ. ຈຳນວນສ່ວນຫຼຸດລາຄານີ້ແມ່ນຈຳນວນທີ່ຄົນເຈັບໃດໜຶ່ງທີ່ມີຄຸນສົມບັດເໝາະສົມສຳລັບການໃຫ້ຄວາມຊ່ວຍເຫຼືອລະດັບຕ່າສຸດພາຍໃຕ້ນະໂຍບາຍໃຫ້ຄວາມຊ່ວຍເຫຼືອທາງດ້ານການເງິນຂອງ Sanford ຈະໄດ້ຮັບເປັນການຫຼຸດຈຳນວນເງິນທີ່ຕິດໜີ້. ຈຳນວນທີ່ຍັງເຫຼືອຖືກພິຈາລະນາຈຳນວນທີ່ລວມິຄວາມຮັບຜິດຊອບສຳລັບການຈ່າຍເປັນສ່ວນບຸກຄົນ, ຫຼັງຈາກຈຳນວນທີ່ຕັດອອກ ແລະ ສ່ວນຫຼຸດລາຄາທັງໝົດ, ລວມທັງສ່ວນຫຼຸດລາຄາທີ່ມີໃຫ້ພາຍໃຕ້ FAP ໄດ້ຖືກນຳມາໃຊ້ ແລະ ຫັກຈຳນວນເງິນໃດໜຶ່ງທີ່ຖືກຈ່າຍຄືນໂດຍຜູ້ຮັບປະກັນໄພອອກ.

ກະລຸນາເບິ່ງແຜ່ນຂະຫຍາຍທີ່ຄັດຕິດມາເຊິ່ງລະບຸການຄຳນວນນີ້ຕາມສະຖານທີ່ບໍລິການຕາມຂົງເຂດ ແລະ ຄ່ອຍເພີ່ມຂື້ນເທື່ອລະນ້ອຍຂອງເປີເຊັນສ່ວນຫຼຸດລາຄາສະເພາະຂົງເຂດທີ່ນຳໃຊ້ໃນເວລາດຳເນີນການຫຼຸດລາຄາສຳລັບການຊ່ວຍເຫຼືອທາງດ້ານການເງິນສຳລັບຂົງເຂດ Sioux Falls ແລະ ຂົງເຂດ Fargo.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.

ການຄຳນວນເຫຼົ່ານີ້ຖືກເຮັດສຳເລັດສົມບູນຕາມພື້ນຖານປະຈຳປີສຳລັບຂໍ້ມູນ ສຳລັບ 12 ເດືອນກ່ອນໜ້າໃນທ້າຍເດືອນພຶດສະພາຂອງປີປະຈຸບັນ ເພື່ອໃຫ້ມີຜົນ ສຳລັບການບໍລິການທີ່ສະໜອງໃຫ້ໃນລະຫວ່າງປີງົບປະມານທີ່ຈະເລີ່ມຕົ້ນຂຶ້ນ ໃນວັນທີ 1 ກໍລະກົດ.

ສະຫງວນລິຂະສິດ© Sanford

ນະໂຍບາຍນີ້ຖືກສະຫງວນລິຂະສິດໂດຍ Sanford. ມັນໄດ້ຮັບການຄຸ້ມຄອງ ໂດຍກົດໝາຍວ່າດ້ວຍລິຂະສິດ ແລະ ເຄື່ອງໝາຍການຄ້າລະຫວ່າງປະເທດ. ມັນຈະຖືກນຳໃຊ້ສຳລັບພາຍໃນເທົ່ານັ້ນ. ທ່ານບໍ່ສາມາດຜະລິດຄືນ, ຈັດພິມຄືນ ຫຼື ແຈກຢາຍຄືນຂໍ້ມູນຈາກນະໂຍບາຍນີ້ ໂດຍບໍ່ມີ ການຍິນຍອມທີ່ເປັນລາຍລັກອັກສອນຢ່າງຊັດເຈນຈາກ Sanford.